University of Basel

# Gender and Labour in the Global South

Article – Laotian

This translation is for a better understanding of the English texts. We are very happy if you join the discussions. Please note that all contributions in the comment section and in the discussion steps need to be in English.

**Access to financial skills: a key tool for sustainable development**

ການເຂົ້າເຖິງທັກສະດ້ານການເງິນ: ເຄື່ອງມືສຳຄັນສຳລັບການພັດທະນາແບບຍືນຍົງ

**Short description:**
ອ່ານວິທີການທີ່ Christine Bigler ແນະນຳໂຄງການເງິນຝາກປະຢັດ ແລະການສ້າງທັກສະສຳລັບຄົນງານຊົ່ວຄາວຢູ່ໃນເຂດຊົນນະບົດຂອງຣາວັນດາ (Rwanda).

**Content:**

"ຂ້ອຍຢາກມີເງິນ ແລະ ອະນາຄົດທີ່ດີຂຶ້ນ. ຂ້ອຍບໍ່ຢາກເປັນຄົນຂໍທານ".
(Marie, casual agricultural worker, Kinigi)

ກວມເອົາ 15 ສ່ວນຮ້ອຍ, ຄົນງານກະສິກອນກອນຊົ່ວຄາວເປັນຕົວແທນຂອງກຸ່ມການຈ້າງງານທີ່ໃຫຍ່ທີ່ສຸດອັນດັບສອງຢູ່ໃນເຂດຊົນນະບົດຂອງຣາວັນດາ. ເຂົາເຈົ້າເຮັດວຽກຢູ່ໃນຂົງເຂດທຸລະກິດທາງການກະສິກຳ ແລະ ຢູ່ໃນກຸ່ມທີ່ທຸກຍາກທີ່ສຸດຂອງປະຊາກອນຣາວັນດາ. The economisation of agriculture ແລະ ການເພີ່ມຂຶ້ນຂອງປະຊາກອນຢ່າງຕໍ່ເນື່ອງ
ນັ້ນນຳໄປສູ່ການແຈກຢາຍທີ່ດິນທີ່ບໍ່ສະເໝີພາບເທົ່າທຽມກັນຫຼາຍຂຶ້ນ. ສ່ວນຫຼາຍ ຄົນງານຊົ່ວຄາວບໍ່ໄດ້ເປັນເຈົ້າຂອງທີ່ດິນເອງ ຫຼື ຕອນດິນທີ່ເປັນຂອງເຂົາເຈົ້າກໍ່ມີຂະໜາດແຄບເກີນໄປທີ່ຈະກວມເຖິງຄວາມຕ້ອງການພື້ນຖານຂອງຄອບຄົວເຂົາເຈົ້າ. ເປັນຜົນໃຫ້ເຂົາເຈົ້າຖືກບັງຄັບໃຫ້ເປັນແຮງງານລາຍວັນ (wage labour).

ສ່ວນທີ່ເພີ່ມຂຶ້ນຂອງຄົນງານຊົ່ວຄາວນັ້ນ ແມ່ນກວມເອົາເພດຍິງສູງ ເຊິ່ງໝາຍຄວາມວ່າຄົນງານສ່ວນໃຫຍ່ໃນຂະແໜງການດັ່ງກ່າວນີ້ແມ່ນແມ່ຍິງ.
ຄ່າແຮງງານແມ່ນຢູ່ໃນກຸ່ມທີ່ຕ່ຳທີ່ສຸດໃນຕະຫຼາດແຮງງານເຂດຊົນນະບົດ, ຢູ່ທີ່ປະມານ 1000 RWF (1 ໂດລາສະຫະລັດ) ຕໍ່ມື້. ເຂົາເຈົ້າເກືອບຈະບໍ່ສາມາດກຸ້ມຕໍ່ຄວາມຕ້ອງການປະຈຳວັນຂອງຕົນເອງ ເຊັ່ນວ່າອາຫານ ແລະ ເຄື່ອງນຸ່ງຫົ່ມ. ດັ່ງນັ້ນ ຈຶ່ງບໍ່ມີຄວາມເປັນໄປໄດ້ທີ່ຈະເກັບອອມ, ແຮງງານກະສິກອນຊົ່ວຄາວ ເຖິງແນວໃດ ກໍ່ຈຳເປັນຕ້ອງໄດ້ຈັດສັນເງິນບາງສ່ວນໄວ້ ແລະ ສ້າງໂອກາດຊ່ອງທາງລາຍຮັບອັນໃໝ່. (Bigler et al. 2017).

"ສິ່ງທ້າທາຍອື່ນໆ [ນອກຈາກແນວຄວາມຄິດທາງທຸລະກິດ] ແມ່ນກ່ຽວຂ້ອງກັບວິທີການຫາເງິນເພື່ອລົງທຶນໃນທຸລະກິດຂະໜາດນ້ອຍ." (Micheline, day labourer, Canyka)

ຜົນຂອງການຄົ້ນຄວ້າທີ່ໄດ້ຈາກໂຄງງານ "ກ່ຽວກັບເພດຍິງ (Feminization), ການຫັນປ່ຽນດ້ານກະສິກໍາ ແລະ ການຈ້າງງານໃນຊົນນະບົດ"[1] ເປັນພື້ນຖານຂອງໂຄງການທີ່ດໍາເນີນຕໍ່ເນື່ອງ "ສ້າງທັກສະດ້ານການເກັບອອມ ແລະ ທັກສະດ້ານການເງິນ ເພື່ອສ້າງຄວາມເຂັ້ມແຂງທາງດ້ານເສດຖະກິດ ແລະ ສະຫວັດດີການຂອງແມ່ຍິງ ແລະ ໄວໜຸ່ມໃນຊົນນະບົດ ຣາວັນດາ"[2]. ໂຄງການແມ່ນໄດ້ຮັບທຶນສະໜັບສະໜູນໂດຍ the "r4d Transformation Accelerating Grant" ຂອງມູນລະນິທິວິທະຍາສາດແຫ່ງຊາດສະວິດ ປະເທດສະວິດເຊີແລນ.

ເປົ້າໝາຍຂອງການດໍາເນີນໂຄງການດັ່ງກ່າວນີ້ ແມ່ນເພື່ອເຊື່ອມຊ່ອງຫວ່າງລະຫວ່າງທິດສະດີກັບການປະຕິບັດ ແລະ ເພື່ອເປັນການສົ່ງເສີມລວມດ້ານການເງິນ (the financial inclusion) ແລະ ການພັດທະນາດ້ານການສຶກສາຂອງຄົນງານຊົ່ວຄາວ ຜ່ານກຸ່ມເງິນຝາກປະຢັດ ທີ່ມີການເຂົ້າເຖິງບັນຊີທະນາຄານຢ່າງເປັນທາງການ ແລະ ການຝຶກອົບຮົມ. ເປົ້າໝາຍແມ່ນເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ຄົນງານຊົ່ວຄາວ ນໍາເອົາເງິນເກັບອອມຂອງຕົນໄປລົງທຶນດ້ວຍຕົນເອງ ຫຼື ເປັນກຸ່ມ ເພື່ອສ້າງແຫຼ່ງລາຍຮັບໃໝ່ໃຫ້ກັບຕົນເອງ.

ໂຄງການມີສາມອົງປະກອບຫຼັກສໍາຄັນຄື: ອັນທີໜຶ່ງ ຄົນງານຊົ່ວຄາວໄດ້ຮັບສັນຍາ 12 ເດືອນຈາກຜູ້ປະກອບການທຸລະກິດກະສິກໍາ ແລະ ໄດ້ມີໂອກາດເຂົ້າຮ່ວມກຸ່ມເງິນຝາກປະຢັດດ້ວຍບັນຊີທະນາຄານ. ໃນກຸ່ມເຫຼົ່ານີ້, ຄົນງານຊົ່ວຄາວຈະຮ່ວມກັນເກັບອອມຕາມຈໍານວນທີ່ກໍານົດເອງ ຈາກເງິນແຮງງານຂອງເຂົາເຈົ້າ.

ອັນທີສອງ, ສະມາຊິກຂອງກຸ່ມເງິນຝາກປະຢັດໄດ້ຮັບຜົນປະໂຫຍດຈາກໂຄງການຝຶກອົບຮົມ. ໂຄງການສ້າງທັກສະນີ້ ກວມເອົາຫຼາຍຫົວຂໍ້ເຊັ່ນ: ການເກັບອອມ ແລະ ການວາງແຜນ ແລະ ການບໍລິຫານທຸລະກິດ.

ອັນທີສາມ, ຂະບວນການແມ່ນມາພ້ອມກັບການສຶກສາ ເພື່ອກວດສອບຄວາມຖືກຕ້ອງ (ການສຶກສາແບບທົດລອງ ເພື່ອການຄວບຄຸມແບບສຸ່ມ (RCT)) ແລະ ການສໍາພາດແບບຄຸນນະພາບ (Bigler and Ingabire 2019a, 2019b).

ໃນເດືອນກັນຍາ 2018, ໂຄງການໄດ້ເລີ່ມຂຶ້ນດ້ວຍການສຶກສາຜູ້ປະກອບການທຸລະກິດກະສິກໍາ 28 ແຫ່ງ ແຕ່ລະແຫ່ງໄດ້ຈັດຕັ້ງກຸ່ມເງິນຝາກປະຢັດເຊິ່ງມີຄົນງານສະມາຊິກປະມານ 10 ຄົນ. ລວມແລ້ວ 75 ສ່ວນຮ້ອຍ ຂອງຄົນງານທັງໝົດທີ່ເຂົ້າຮ່ວມແມ່ນແມ່ຍິງ.

---

[1] For more information see: https://www.fate.unibe.ch/
[2] For more information see: http://www.r4d.ch/News/Pages/191217_TransformationAcceleratingGrants2019.aspx

ໃນເດືອນກຸມພາ 2020, ມີອີກ 14 ກຸ່ມເງິນຝາກປະຢັດໄດ້ຮັບການສ້າງຂຶ້ນ. ຄວາມສົນໃຈຕໍ່ກັບໂຄງການນີ້ຍິ່ງໃຫຍ່ຫຼາຍຈົນບໍ່ສາມາດຮອມເອົາຄົນງານຊົ່ວຄາວໄດ້ທັງໝົດ. ຜູ້ເຂົ້າຮ່ວມໃນກຸ່ມເງິນຝາກປະຢັດສ່ວນໃຫຍ່ແມ່ນມີຄວາມເພິ່ງພໍໃຈຕໍ່ກັບໂຄງການນີ້ຫຼາຍ ແລະ ມີຫຼາຍກຸ່ມກໍໄດ້ນໍາເອົາເງິນທີ່ຝາກໄວ້ໄປລົງທຶນໃໝ່ແລ້ວ.

ຜົນຂອງການປະເມີນຄັ້ງທໍາອິດ ສະແດງໃຫ້ເຫັນວ່າ ເງິນຝາກປະຢັດ ມັກຈະຖືກນໍາໃຊ້ເຂົ້າໃນການຊື້ ແກະ, ເມັດພືດ ແລະ ປະກັນໄພສຸຂະພາບ ຕະຫຼອດຮອດການເຊົ່າເນື້ອທີ່ດິນ. ດັ່ງນັ້ນ ຈຶ່ງສາມາດສັງເກດເຫັນການປັບປຸງເບື້ອງຕົ້ນຂອງສະພາບຊີວິດການເປັນຢູ່ທີ່ບໍ່ໝັ້ນຄົງໄດ້. (Ingabire 2020a).

ການລະບາດຄັ້ງໃຫຍ່ຂອງພະຍາດໂຄວິດ 19 ເຮັດໃຫ້ເກີດຄວາມຫຼ້າຊ້າໃນການດໍາເນີນໂຄງການ ແລະ ຕ້ອງເລື່ອນໂຄງການຝຶກອົບຮົມ ແລະ ການຮອບຮອມຂໍ້ມູນອອກໄປເປັນເວລາຫຼາຍເດືອນ. ໂຊກດີທີ່ການຜະລິດທາງການກະສິກໍາບໍ່ໄດ້ຮັບຜົນກະທົບຈາກການປິດເມືອງໃນຣວັນດາ ແລະ ຄົນງານຊົ່ວຄາວກໍສາມາດດໍາເນີນໂຄງການເງິນຝາກປະຢັດຕໍ່ໄປໄດ້ (Ingabire 2020b).[3]

**ຂໍ້ມູນເພີ່ມເຕີມ**:

Bigler Christine (2020): Why is it important to look at agricultural casual workers? Knowledge for Development, r4d programme, Swiss National Foundation. https://www.k4d.ch/why-is-it-important-to-look-at-agricultural-casual-workers/

Collier Tracy (2021): Gender and Financial Wellbeing. Gender Equality. SpringerLink. https://link.springer.com/referenceworkentry/10.1007/978-3-319-95687-9_112

Makri Anita (2020): Banking on savings: Women get bargaining power in rural Rwanda. Knowledge for Development, r4d programme, Swiss National Foundation. https://www.k4d.ch/banking-on-savings-women-get-bargaining-power-in-rural-rwanda/

**ເອກະສານອ້ອນທ້າຍ**

Bigler, Christine; Amacker, Michèle; Ingabire, Chantal; Birachi, Eliud (2017): Rwanda's gendered agricultural transformation. A mixed-method study on the rural labour market, wage gap and care penalty. In *Women's Studies International Forum* 64, pp. 17–27. DOI: 10.1016/j.wsif.2017.08.004.

Bigler, Christine; Ingabire Chantal (2019a): New saving possibilities to empower women and youth in rural Rwanda: a story about bridging theory and practice. Blog, Feminization, agricultural transition and rural employment.  Available online at https://fateproject.wordpress.com/2019/08/05/new-saving-possibilities-to-empower-women-and-youth-in-rural-rwanda-a-story-about-bridging-theory-and-practice/

[3] This article was first published in German in the journal Gender Studies from the Interdisciplinary Center for Gender Studies, University of Bern, in September 2020.

University of Basel

Bigler, Christine; Ingabire Chantal (2019b): Mid-term evaluation – foster financial inclusion. Blog, Feminization, agricultural transition and rural employment. Available online at https://fateproject.wordpress.com/2019/11/06/mid-term-evaluation-foster-financial-inclusion-blog-ii-of-iii/

Ingabire Chantal (2020a): Report July/August 2020. Building up savings and financial skills for economic empowerment and wellbeing of women and youth in rural Rwanda. Not published.

Ingabire Chantal (2020b): Report September/Octobre 2020. Building up savings and financial skills for economic empowerment and wellbeing of women and youth in rural Rwanda. Not published.